# ປະກາດ
## ເລື່ອງການສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານ ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022

## I. ວັດຖຸປະສົງ

ເນື່ອງຈາກວ່າອາຍຸການຂອງສະພາບໍລິຫານຊຸດເກົ່າທີ່ໃກ້ຈະສິ້ນສຸດລົງແລ້ວນີ້ ແລະ ເພື່ອເປັນການສົ່ງເສີມການດູແລເບິ່ງແຍງກິດຈະການທີ່ດີ ແລະ ເຫັນເຖິງຄວາມສຳຄັນຂອງຜູ້ຖືຮຸ້ນ, ບໍລິສັດຈຶ່ງຈະໃຫ້ຜູ້ຖືຮຸ້ນສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານ ຕາມຫຼັກການ ແລະ ເງື່ອນໄຂທີ່ບໍລິສັດກຳນົດ.

## II. ຫຼັກການ ແລະ ເງື່ອນໄຂຂອງການສະເໜີລາຍຊື່

1. ຄຸນສົມບັດຂອງຜູ້ຖືຮຸ້ນທີ່ມີສິດສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານ.

   ຜູ້ຖືຮຸ້ນ ຫຼື ກຸ່ມຜູ້ຖືຮຸ້ນ ທີ່ຖືຮຸ້ນລວມກັນທັງໝົດ **ບໍ່ໜ້ອຍກວ່າ ຫ້າສ່ວນຮ້ອຍ** ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດຈົດທະບຽນ ຕາມມາດຕາ 8 ຂອງຂໍ້ຕົກລົງວ່າດ້ວຍສະພາບໍລິຫານຂອງບໍລິສັດຈົດທະບຽນ ເລກທີ 10 /ຄຄຊ, ລົງວັນທີ 26 ເມສາ 2019.

2. ການສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານ.

   ຜູ້ຖືຮຸ້ນທີ່ມີຄຸນສົມບັດຄົບຖ້ວນຕາມຫຼັກການຂ້າງເທິງນີ້ສາມາດສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານໄດ້ ໂດຍປະກອບຕາມແບບຟອມ *(ແບບຂໍສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022)* ພ້ອມດ້ວຍເອກະສານຫຼັກຖານທີ່ກ່ຽວຂ້ອງ ແລະ ຂໍໃຫ້ຜູ້ທີ່ໄດ້ຮັບການສະເໜີຊື່ລົງສະໝັກເປັນສະມາຊິກສະພາບໍລິຫານປະກອບຕາມແບບຟອມ *(ແບບຟອມຂໍ້ມູນບຸກຄົນທີ່ໄດ້ຮັບການສະເໜີລາຍຊື່ລົງສະໝັກເປັນສະມາຊິກສະພາບໍລິຫານ ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022)* ພ້ອມເອກະສານຫຼັກຖານປະກອບທີ່ກ່ຽວຂ້ອງໃຫ້ຄົບຖ້ວນ ແລະ ສົມບູນ ແລ້ວສົ່ງໃຫ້ບໍລິສັດໄດ້ຕັ້ງແຕ່ວັນທີ **25 ມັງກອນ 2023 ເຖິງ ວັນທີ 8 ກຸມພາ 2023** ຕາມທີ່ຢູ່ດັ່ງນີ້:

   **ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສະເໜີຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານ)**
   **ທີ່ຕັ້ງສຳນັກງານ: ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.**
   **ໂທລະສັບ: (856) 21-415645**

   ໃນກໍລະນີຜູ້ຖືຮຸ້ນຫຼາຍຄົນຮ່ວມກັນສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານ ຜູ້ຖືຮຸ້ນທຸກຄົນຕ້ອງປະກອບຕາມແບບຟອມ *(ແບບຂໍສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022)* ແລະ ລົງລາຍເຊັນໄວ້ເປັນຫຼັກຖານ ແລ້ວຮວບຮວມສົ່ງເປັນຊຸດດຽວກັນ.

3. ບໍລິສັດຈະພິຈາລະນາລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານ ທີ່ຜູ້ຖືຮຸ້ນສະເໜີພ້ອມທັງເອກະສານຫຼັກຖານທີ່ກ່ຽວຂ້ອງຢ່າງຄົບຖ້ວນ, ຖືກຕ້ອງ ແລະ ມີຂໍ້ມູນພຽງພໍ. ທັງນີ້, ຜູ້ທີ່ໄດ້ຮັບການສະເໜີຊື່ລົງສະໝັກເປັນສະມາຊິກສະພາບໍລິຫານ ຈະຕ້ອງມີຄຸນສົມບັດຕາມກົດໝາຍ ແລະ ຂໍ້ກຳນົດຂອງບໍລິສັດ.

**III. ການພິຈາລະນາຄຸນສົມບັດຂອງຜູ້ທີ່ໄດ້ຮັບການສະເໜີຊື່ລົງສະໝັກເປັນສະມາຊິກສະພາບໍລິຫານ**

ບໍລິສັດຈະພິຈາລະນາຄຸນສົມບັດຂອງຜູ້ທີ່ໄດ້ຮັບການສະເໜີຊື່ລົງສະໝັກເປັນສະມາຊິກສະພາບໍລິຫານຕາມກົດໝາຍ ແລະ ຂໍ້ກຳນົດຂອງບໍລິສັດ ດັ່ງນີ້:

1) ຄຸນສົມບັດຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ 46/ສພສຊ, ລົງວັນທີ 26 ທັນວາ 2013;
2) ຄຸນສົມບັດຕາມ ຂໍ້ຕົກລົງວ່າດ້ວຍສະພາບໍລິຫານຂອງບໍລິສັດຈົດທະບຽນ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019; ແລະ/ຫຼື
3) ກໍລະນີທີ່ຕ້ອງການສະເໜີຊື່ສະມາຊິກສະພາບໍລິຫານທີ່ເປັນສະມາຊິກອິດສະຫຼະແມ່ນຕ້ອງມີ ຄຸນສົມບັດອື່ນໆຕາມທີ່ລະບຽບພາຍໃນຂອງບໍລິສັດກຳນົດເພີ່ມເຕີມ ໄດ້ແກ່:
   - ບໍ່ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະ ບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;
   - ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ເປັນຕົ້ນ ໃນສະຖານສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ;
   - ບໍ່ຖືຮຸ້ນເກີນໜຶ່ງສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດຈົດທະບຽນໃດໜຶ່ງ;
   - ບໍ່ເປັນບຸກຄົນ ທີ່ມີຄວາມຜູກພັນທາງສາຍເລືອດ ຫຼື ໂດຍການຈົດທະບຽນຕາມກົດໝາຍ ທີ່ເປັນພໍ່, ແມ່, ຄູ່ສົມລົດ, ພີ່ນ້ອງ ແລະ ລູກ ຂອງຜູ້ບໍລິຫານ ຫຼື ຜູ້ຖືຮຸ້ນລາຍໃຫຍ່, ຜູ້ມີອຳນາດຄວບຄຸມ ຫຼື ບຸກຄົນທີ່ຈະໄດ້ຮັບການສະເໜີໃຫ້ເປັນຜູ້ບໍລິຫານ ຫຼື ຜູ້ມີອຳນາດຄວບຄຸມບໍລິສັດ ຫຼື ບໍລິສັດໃນເຄືອ;
   - ບໍ່ມີ ຫຼື ເຄີຍມີຄວາມສຳພັນທາງທຸລະກິດກັບບໍລິສັດ, ບໍລິສັດໃນເຄືອ, ຜູ້ຖືຮຸ້ນລາຍໃຫຍ່, ຜູ້ຖືຮຸ້ນທີ່ມີອຳນາດຄວບຄຸມບໍລິສັດ ໃນລັກສະນະທີ່ອາດຈະຂັດກັບການໃຊ້ການວິນິດໄສຢ່າງອິດສະຫຼະຂອງຕົນ. ລວມທັງບໍ່ໄດ້ເປັນ ຜູ້ ຖືຮຸ້ນ ຫຼື ຜູ້ທີ່ມີອຳນາດໃນການຄວບຄຸມບໍລິສັດ ທີ່ມີຄວາມສຳພັນທາງທຸລະກິດກັບບໍລິສັດໃຫຍ່ ແລະ ບໍລິສັດໃນເຄືອ ຍົກເວັ້ນໃນກໍລະນີ ທີ່ໄດ້ໝົດໜ້າທີ່ດັ່ງກ່າວມາໄດ້ 2 ປີແລ້ວ ກ່ອນເຂົ້າຮັບຕຳແໜ່ງ;
   - ບໍ່ເປັນ ຫຼື ເຄີຍເປັນຜູ້ຖືຮຸ້ນ, ສະມາຊິກສະພາບໍລິຫານ, ຜູ້ອຳນວຍການ, ຜູ້ທີ່ມີອຳນາດຄວບຄຸມໃນບໍລິສັດກວດສອບບັນຊີ ທີ່ບໍລິສັດກຳລັງຈະຈ້າງເປັນທີ່ປຶກສາດ້ານການກວດສອບບັນຊີ ຍົກເວັ້ນໃນກໍລະນີທີ່ ໄດ້ໝົດໜ້າທີ່ດັ່ງກ່າວມາໄດ້ 2 ປີແລ້ວ ກ່ອນເຂົ້າຮັບຕຳແໜ່ງ;
   - ບໍ່ເປັນ ຫຼື ເຄີຍເປັນຜູ້ໃຫ້ບໍລິການ, ຜູ້ຖືຮຸ້ນ, ສະມາຊິກສະພາບໍລິຫານ ຫຼື ຜູ້ທີ່ມີອຳນາດຄວບຄຸມໃນບໍລິສັດ ເຊິ່ງໃຫ້ບໍລິການດ້ານວິຊາຊີບການເງິນ, ການລົງທຶນ, ກົດໝາຍ ແລະ ອື່ນໆ ທີ່ໄດ້ຮັບຄ່າແຮງງານເຖິງ 500.000.000 ກີບ ຈາກບໍລິສັດນີ້ ແລະ ບໍລິສັດໃນເຄືອ ຫຼື ຈາກຜູ້ທີ່ມີອຳນາດຄວບຄຸມຂອງບໍລິສັດ ຫຼື ໃນກໍລະນີໃດໜຶ່ງທີ່ສົ່ງຜົນໃຫ້ຕົນບໍ່ສາມາດປະກອບຄຳເຫັນໄດ້ຢ່າງເປັນເອກະລາດ ຍົກເວັ້ນໃນກໍລະນີທີ່ໄດ້ໝົດໜ້າທີ່ດັ່ງກ່າວມາໄດ້ 2 ປີແລ້ວ ກ່ອນເຂົ້າຮັບຕຳແໜ່ງ;

- ບໍ່ປະກອບກິດຈະການທີ່ມີລັກສະນະດຽວກັນ ຫຼື ເປັນການແຂ່ງຂັນກັນກັບບໍລິສັດ ແລະ ບໍລິສັດໃນເຄືອ;
- ບໍ່ເຄີຍຖືກປົດຕໍາແໜ່ງຈາກການເປັນສະມາຊິກສະພາບໍລິຫານ
- ບໍ່ດໍາລົງຕໍາແໜ່ງເປັນຜູ້ອໍານວຍການ, ຮອງຜູ້ອໍານວຍການ ຂອງບໍລິສັດຈໍາກັດຜູ້ດຽວ ແລະ ບໍ່ໄດ້ຖືຮຸ້ນໃນວິສາຫະກິດອື່ນແຕ່ຫ້າສິບສ່ວນຮ້ອຍຂຶ້ນໄປຂອງຈໍານວນຮຸ້ນທັງໝົດ ເວັ້ນເສຍແຕ່ໄດ້ຮັບການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ. ກໍລະນີເຄີຍເປັນຜູ້ອໍານວຍການ, ຮອງຜູ້ອໍານວຍການ ຂອງບໍລິສັດຈໍາກັດຜູ້ດຽວ ແລະ ຖືຮຸ້ນໃນວິສາຫະກິດອື່ນແຕ່ຫ້າສິບສ່ວນຮ້ອຍຂຶ້ນໄປ ຂອງຈໍານວນຮຸ້ນທັງໝົດ ຕ້ອງໄດ້ພົ້ນຈາກຕໍາແໜ່ງດັ່ງກ່າວຢ່າງໜ້ອຍສອງປີຂຶ້ນໄປ;
- ບໍ່ມີສິ່ງຂັດຂວາງອື່ນໆ ທີ່ຈະເປັນອຸປະສັກໃນການໃຫ້ຄໍາເຫັນຢ່າງອິດສະຫຼະຕໍ່ການບໍລິຫານຂອງບໍລິສັດ; ແລະ

__ໝາຍເຫດ:__

1. ຫາກການສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານ ເຮັດຜິດຂໍ້ກໍານົດຕາມປະກາດສະບັບນີ້ ລວມເຖິງແຕ່ບໍ່ຈໍາກັດພຽງ ການສະເໜີຊື່ໂດຍຜູ້ຖືຮຸ້ນທີ່ຖືຮຸ້ນຕໍ່າກວ່າຫ້າສ່ວນຮ້ອຍຂອງຈໍານວນຮຸ້ນທັງໝົດຂອງບໍລິສັດ ຫຼື ຜູ້ທີ່ໄດ້ຮັບການສະເໜີຊື່ມີຄຸນສົມບັດບໍ່ຄົບຖ້ວນ ເປັນຕົ້ນ ບໍລິສັດຂໍສະຫງວນສິດໃນການບໍ່ຮັບພິຈາລະນາຄໍາສະເໜີດັ່ງກ່າວ; ແລະ
2. ສະພາບໍລິຫານຈະພິຈາລະນາ ແລະ ຮັບຮອງບຸກຄົນທີ່ຜ່ານຄວາມເຫັນຊອບຈາກກອງປະຊຸມສະພາບໍລິຫານ ເພື່ອສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2022. ສໍາລັບບຸກຄົນທີ່ບໍ່ຜ່ານຄວາມເຫັນດີຈາກສະພາບໍລິຫານ, ບໍລິສັດຈະແຈ້ງໃຫ້ຜູ້ສະເໜີຮັບຊາບຜົນການພິຈາລະນາ ພ້ອມເຫດຜົນຜ່ານທາງຊ່ອງທາງການຕິດຕໍ່ສື່ສານທີ່ບໍລິສັດເຫັນວ່າເໝາະສົມ ຫຼັງຈາກກອງປະຊຸມສະພາບໍລິຫານ. **ໃນການພິຈາລະນານີ້ ໃຫ້ຖືວ່າຄວາມເຫັນຂອງສະພາບໍລິຫານຖືເປັນທີ່ສຸດ**.

## ແບບຂໍສະເໜີລາຍຊື່ຜູ້ທີ່ຈະລົງສະໝັກເປັນສະມາຊິກສະພາບໍລິຫານໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2022

1. **ຂໍ້ມູນທົ່ວໄປຂອງຜູ້ຖືຮຸ້ນ**

   ຊື່ ແລະ ນາມສະກຸນ ຫຼື ຊື່ນິຕິບຸກຄົນ :______________________________

   ທີ່ຢູ່ປະຈຸບັນ/ທີ່ຕັ້ງສໍານັກງານໃຫຍ່:

   ເຮືອນ ຫຼື ອາຄານເລກທີ: ____________________ ໜ່ວຍ:______, ຖະໜົນ______________________

   ບ້ານ____________________, ເມືອງ _____________________, ແຂວງ ____________________

   ໂທລະສັບ ______________________________ ແຟັກ: ________________________________

   ອີເມວ ______________________________________________________________________

2. **ຈໍານວນຮຸ້ນທີ່ຖື:** ____________________________________________________________

3. **ລາຍຊື່ບຸກຄົນທີ່ມີຈຸດປະສົງສະເໜີໃຫ້ລົງສະໝັກເປັນສະມາຊິກສະພາບໍລິຫານ** _________________________

   ______________________________________________________________________________

4. **ເອກະສານຫຼັກຖານຂອງຜູ້ຖືຮຸ້ນທີ່ຕ້ອງຄັດຕິດພ້ອມຟອມຂໍສະເໜີຊື່ບຸກຄົນ**

   ☐ ກໍລະນີຜູ້ຖືຮຸ້ນເປັນບຸກຄົນທໍາມະດາ ຕ້ອງຄັດຕິດສໍາເນົາບັດປະຈໍາຕົວ ຫຼື ໜັງສືຜ່ານແດນ (ກໍລະນີເປັນບຸກຄົນຕ່າງປະເທດ) ພ້ອມລົງລາຍເຊັນຮັບຮອງສໍາເນົາຖືກຕ້ອງ;

   ☐ ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນ ຕ້ອງຄັດຕິດສໍາເນົາໜັງສືຮັບຮອງນິຕິບຸກຄົນ ແລະ ສໍາເນົາບັດປະຈໍາຕົວ ຫຼື ໜັງສືຜ່ານແດນ (ກໍລະນີເປັນບຸກຄົນຕ່າງປະເທດ) ຂອງຜູ້ອໍານວຍການທີ່ມີອໍານາດເຊັນໃນແບບຟອມສະເໜີນີ້ ພ້ອມຮັບຮອງສໍາເນົາຖືກຕ້ອງ.

5. **ຄໍາຮັບຮອງ**

   ຂ້າພະເຈົ້າຂໍຮັບຮອງວ່າຂໍ້ມູນ ແລະ ເອກະສານຫຼັກຖານທີ່ຄັດຕິດເພີ່ມເຕີມມານີ້ ຖືກຕ້ອງຄົບຖ້ວນ ແລະ ຍິນຍອມໃຫ້ບໍລິສັດເປີດເຜີຍຂໍ້ມູນ ຫຼື ເອກະສານຫຼັກຖານດັ່ງກ່າວໄດ້.

ຊື່ ແລະ ລາຍເຊັນ (ຜູ້ຖືຮຸ້ນ) ______________________

(________________________)

ວັນທີ___________________________

**ແບບຟອມຂໍ້ມູນບຸກຄົນທີ່ໄດ້ຮັບການສະເໜີລາຍຊື່ລົງສະໝັກເປັນສະມາຊິກສະພາບໍລິຫານ ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາ ປີ 2022**

**1. ຂໍ້ມູນທົ່ວໄປຂອງບຸກຄົນທີ່ໄດ້ຮັບການສະເໜີລາຍຊື່:**

1) ຊື່: (ພາສາລາວ)________________________ (ນາມສະກຸນ) ______________________________

(ພາສາອັງກິດ) ________________________(ນາມສະກຸນ) ______________________________

2) ວັນເດືອນປີເກີດ: ________________________ອາຍຸ______ປີ, ສັນຊາດ: ____________________

3) ສະຖານະພາບການແຕ່ງງານ: [ ] ໂສດ [ ] ຢ່າຮ້າງ [ ] ແຕ່ງງານແລ້ວ

ຊື່ຄູ່ສົມລົດ: ____________________________ (ນາມສະກຸນ)______________________________

4) ລາຍອະອຽດກ່ຽວກັບລູກ: ຈໍານວນ ________ ທ່ານ

| ຊື່ | ວັນເດືອນປີເກີດ | ອາຍຸ (ປີ) | ສະຖານທີ່ເຮັດວຽກ ຫຼື ຮຽນ |
|---|---|---|---|
| | | | |
| | | | |
| | | | |
| | | | |

**2. ທີ່ຢູ່ປະຈຸບັນ:**

1) ທີ່ຕັ້ງສະຖານທີ່ປະກອບທຸລະກິດ/ເຮັດວຽກ:

ເຮືອນ ຫຼື ອາຄານເລກທີ: __________________ ໜ່ວຍ: _______, ຖະໜົນ____________________

ບ້ານ______________, ເມືອງ __________________________, ແຂວງ ____________________

ໂທລະສັບ ____________________________ ແຟັກ: __________________________________

ອີເມວ ______________________________________________________________________

2) ທີ່ຢູ່ອາໃສ:

ເຮືອນ ຫຼື ອາຄານເລກທີ: __________________ ໜ່ວຍ: _______, ຖະໜົນ____________________

ບ້ານ______________, ເມືອງ __________________________, ແຂວງ ____________________

ໂທລະສັບ ____________________________ ແຟັກ: __________________________________

ອີເມວ ______________________________________________________________________

3) ທີ່ຢູ່ໃນສປປ.ລາວ (ກໍລະນີຜູ້ໄດ້ຮັບການສະເໜີຊື່ແມ່ນເປັນບຸກຄົນຕ່າງປະເທດໃຫ້ລະບຸທີ່ຢູ່ທີ່ສາມາດຕິດຕໍ່ໄດ້ໃນ ສປປ.ລາວ):

ເຮືອນ ຫຼື ອາຄານເລກທີ: __________________ ໜ່ວຍ: _______, ຖະໜົນ____________________

ບ້ານ______________, ເມືອງ __________________________, ແຂວງ ____________________

ໂທລະສັບ ____________________________ ແຟັກ: __________________________________

ອີເມວ ______________________________________________________________________

**3. ຄຸນສົມບັດຕາມວິຊາອາຊີບ**

1) ລະດັບການສຶກສາ

| ຊື່ສະຖາບັນ | ສາຂາວິຊາ | ແຕ່ປີໃດຫາປີໃດ |
|---|---|---|
| | | |
| | | |
| | | |
| | | |

2) ຫຼັກສູດການຝຶກອົບຮົມ ຫຼື ສໍາມະນາທີ່ກ່ຽວຂ້ອງກັບການເປັນຜູ້ອໍານວຍການບໍລິສັດຈົດທະບຽນ/ສະຖາບັນການເງິນ.

| ຫຼັກສູດ | ພາກສ່ວນຈັດຫຼັກສູດ | ປີທີ່ເຂົ້າຮ່ວມ |
|---|---|---|
| | | |
| | | |
| | | |
| | | |

3) ປະສົບການເຮັດວຽກຕັ້ງແຕ່ອະດີດຈົນເຖິງປະຈຸບັນ (ລະບຸທຸກຕໍາແໜ່ງ ທັງບໍລິສັດເອກະຊົນ, ໜ່ວຍງານລັດຖະການ, ລັດວິສາຫະກິດ, ໜ່ວຍງານອິດສະຫຼະ ແລະ ອື່ນໆ)

| ປະເພດທຸລະກິດ | ຕໍາແໜ່ງ | ສະຖານທີ່ເຮັດວຽກ | ແຕ່ປີໃດຫາປີໃດ |
|---|---|---|---|
| | | | |
| | | | |
| | | | |
| | | | |

4) ໜ້າທີ່ຄວາມຮັບຜິດຊອບໃນໜ້າທີ່ຕໍາແໜ່ງປະຈຸບັນ

________________________________________
________________________________________
________________________________________
________________________________________
________________________________________
________________________________________
____________

5) ຄຸນສົມບັດຕາມກົດໝາຍ ແລະ ຂໍ້ກໍານົດຕາມບໍລິສັດກໍານົດ (ກໍລະນີຜູ້ທີ່ໄດ້ຮັບການສະເໜີຊື່ໃຫ້ເປັນສະມາຊິກສະພາບໍລິຫານ ແລະ ເປັນສະມາຊິກອິດສະຫຼະ)

5.1. ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍມາກ່ອນ ແລະ/ຫຼື ເປັນຜູ້ບໍລິຫານໃນນິຕິບຸກຄົນທີ່ຖືກສານຕັດສິນໃຫ້ລົ້ມລະລາຍ?

☐ ບໍ່ແມ່ນ ☐ ແມ່ນ

5.2.

ເຄີຍຖືກສານຕັດສິນລົງໂທດທາງອາຍາ ເປັນຕົ້ນ ໃນສະຖານສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ?

☐ ບໍ່ແມ່ນ ☐ ແມ່ນ ໃນສະຖານ ------------------------------------------------

------------------------------------------------

5.3.

ເປັນບຸກຄົນ ທີ່ມີຄວາມຜູກພັນທາງສາຍເລືອດ ຫຼື ໂດຍການຈົດທະບຽນຕາມກົດໝາຍ ທີ່ເປັນພໍ່, ແມ່, ຄູ່ສົມລົດ, ພີ່ນ້ອງ ແລະ ລູກ ຂອງຜູ້ບໍລິຫານ ຫຼື ຜູ້ຖືຮຸ້ນລາຍໃຫຍ່, ຜູ້ມີອຳນາດຄວບຄຸມ ຫຼື ບຸກຄົນທີ່ຈະໄດ້ຮັບການສະເໜີໃຫ້ເປັນຜູ້ບໍລິຫານ ຫຼື ຜູ້ມີອຳນາດຄວບຄຸມບໍລິສັດ ຫຼື ບໍລິສັດໃນເຄືອ?

☐ ບໍ່ແມ່ນ ☐ ແມ່ນ ມີຄວາມຜູກພັນໂດຍ ------------------------------------------------

------------------------------------------------

5.4.

ເປັນ ຫຼື ເຄີຍເປັນຜູ້ໃຫ້ບໍລິການ, ຜູ້ຖືຮຸ້ນ, ສະມາຊິກສະພາບໍລິຫານ ຫຼື ຜູ້ທີ່ມີອຳນາດຄວບຄຸມໃນບໍລິສັດ ເຊິ່ງໃຫ້ບໍລິການດ້ານວິຊາຊີບການເງິນ, ການລົງທຶນ, ກົດໝາຍ ແລະ ອື່ນໆ ທີ່ໄດ້ຮັບຄ່າແຮງງານເຖິງ 500.000.000 ກີບ ຈາກບໍລິສັດນີ້ ແລະ ບໍລິສັດໃນເຄືອ ຫຼື ຈາກຜູ້ທີ່ມີອຳນາດຄວບຄຸມຂອງບໍລິສັດ ຫຼື ໃນກໍລະນີໃດໜຶ່ງທີ່ສົ່ງຜົນໃຫ້ຕົນບໍ່ສາມາດປະກອບຄຳເຫັນໄດ້ຢ່າງເປັນເອກະລາດ ຍົກເວັ້ນໃນກໍລະນີທີ່ໄດ້ໝົດໜ້າທີ່ດັ່ງກ່າວມາໄດ້ 2 ປີແລ້ວ?

☐ ບໍ່ແມ່ນ ☐ ແມ່ນ ໄດ້ແກ່: ------------------------------------------------

------------------------------------------------

5.5.

ເປັນ ຫຼື ເຄີຍເປັນຜູ້ຖືຮຸ້ນ, ສະມາຊິກສະພາບໍລິຫານ, ຜູ້ອຳນວຍການ ຫຼື ຜູ້ທີ່ມີອຳນາດຄວບຄຸມໃນບໍລິສັດກວດສອບບັນຊີ ທີ່ບໍລິສັດກຳລັງຈະຈ້າງເປັນທີ່ປຶກສາດ້ານການກວດສອບບັນຊີ ຍົກເວັ້ນໃນກໍລະນີທີ່ໄດ້ພົ້ນຈາກໜ້າທີ່ດັ່ງກ່າວມາໄດ້ 2 ປີແລ້ວ?

☐ ບໍ່ແມ່ນ ☐ ແມ່ນ

5.6.

ຖືຮຸ້ນເກີນໜຶ່ງສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງບໍລິສັດຈົດທະບຽນໃດໜຶ່ງ

☐ ບໍ່ແມ່ນ ☐ ແມ່ນ

ຖືຮຸ້ນໃນບໍລິສັດ: ------------------------------------------------

------------------------------------------------

5.7.

ປະກອບກິດຈະການທີ່ມີລັກສະນະດຽວກັນ ຫຼື ເປັນການແຂ່ງຂັນກັນກັບບໍລິສັດ ແລະ ບໍລິສັດໃນເຄືອ?

☐ ບໍ່ແມ່ນ ☐ ແມ່ນ

5.8.

ເຄີຍຖືກປົດຕຳແໜ່ງຈາກການເປັນສະມາຊິກສະພາບໍລິຫານຂອງວິສາຫະກິດໃດໜຶ່ງ?

☐ ບໍ່ແມ່ນ ☐ ແມ່ນ

5.9.

ຖືຮຸ້ນໃນວິສາຫະກິດອື່ນແຕ່ຫ້າສິບສ່ວນຮ້ອຍຂຶ້ນໄປຂອງຈຳນວນຮຸ້ນທັງໝົດ ຫຼື ເຄີຍຖືຮຸ້ນໃນວິສາຫະກິດອື່ນແຕ່ຫ້າສິບສ່ວນຮ້ອຍຂຶ້ນໄປຂອງຈຳນວນຮຸ້ນທັງໝົດ ແລະ ມອບໂອນຮຸ້ນໃຫ້ແກ່ບຸກຄົນອື່ນຍັງບໍ່ຮອດສອງປີ?

☐ ບໍ່ແມ່ນ ☐ ແມ່ນ

ຖືຮຸ້ນ ຫຼື ເຄີຍຖືຮຸ້ນໃນວິສາຫະກິດ: ----------------------------------------

---------------------------------- ແຕ່ຫ້າສິບສ່ວນຮ້ອຍຂຶ້ນໄປ

5.10.
ມີ ຫຼື ເຄີຍມີຄວາມສຳພັນທາງທຸລະກິດກັບບໍລິສັດ, ບໍລິສັດໃນເຄືອ, ຜູ້ຖືຮຸ້ນລາຍໃຫຍ່ ຫຼື ຜູ້ຖືຮຸ້ນທີ່ມີອຳນາດຄວບຄຸມບໍລິສັດ ໃນລັກສະນະທີ່ອາດຈະຂັດກັບການໃຊ້ການວິນິດໄສຢ່າງອິດສະຫຼະຂອງຕົນ ຫຼື ເປັນ ຜູ້ຖືຮຸ້ນ ຫຼື ຜູ້ທີ່ມີອຳນາດໃນການຄວບຄຸມໃນວິສາຫະກິດໃດໜຶ່ງທີ່ມີຄວາມສຳພັນທາງທຸລະກິດກັບບໍລິສັດ ແລະ ບໍລິສັດໃນເຄືອ ຍົກເວັ້ນໃນກໍລະນີທີ່ໄດ້ໝົດໜ້າທີ່ດັ່ງກ່າວມາໄດ້ 2 ປີແລ້ວ?

☐ ບໍ່ແມ່ນ ☐ ແມ່ນ

5.11.
ດຳລົງຕຳແໜ່ງເປັນຜູ້ອຳນວຍການ, ຮອງຜູ້ອຳນວຍການ ຂອງບໍລິສັດຈຳກັດຜູ້ດຽວ ຫຼື ເຄີຍເປັນ ແລະ ຍັງພົ້ນຈາກຕຳແໜ່ງດັ່ງກ່າວບໍ່ຮອດ 2 ປີ

☐ ບໍ່ແມ່ນ ☐ ແມ່ນ
ໄດ້ແກ່:------------------------------------------------------------
------------------------------------------------------------

5.12.
ມີສິ່ງຂັດຂວາງອື່ນໆ ທີ່ຈະເປັນອຸປະສັກໃນການໃຫ້ຄຳເຫັນຢ່າງອິດສະຫຼະຕໍ່ການບໍລິຫານຂອງບໍລິສັດ

☐ ບໍ່ແມ່ນ ☐ ແມ່ນ
ໄດ້ແກ່:------------------------------------------------------------
------------------------------------------------------------

**4. ເອກະສານປະກອບການພິຈາລະນາທີ່ຮັບຮອງໂດຍບຸກຄົນທີ່ໄດ້ຮັບການສະເໜີຊື່**

1) ຫຼັກຖານສະແດງລະດັບການສຶກສາ ແລະ ການຝຶກອົບຮົມ;
2) ສຳເນົາບັດປະຈຳຕົວ (ກໍລະນີເປັນຜູ້ມີສັນຊາດລາວ) ຫຼື ສຳເນົາໜັງສືຜ່ານແດນ (ກໍລະນີເປັນບຸກຄົນຕ່າງປະເທດ);
3) ສຳເນົາປື້ມສຳມະໂນຄົວ (ກໍລະນີເປັນຜູ້ມີສັນຊາດລາວ);
4) ໃບແຈ້ງໂທດ (ກໍລະນີເປັນຜູ້ມີສັນຊາດລາວ) ຫຼື ໜັງສືຮັບຮອງຄວາມປະພຶດ (ກໍລະນີເປັນບຸກຄົນຕ່າງປະເທດ);
5) ໜັງສືຮັບຮອງການເຮັດວຽກຈາກສະຖານທີ່ເຮັດວຽກປະຈຸບັນ ຫຼື ລ່າສຸດ;
6) ໃບຢັ້ງຢືນສຸຂະພາບທີ່ອອກໂດຍໂຮງໝໍ ບໍ່ເກີນ 6 ເດືອນ ກ່ອນໄດ້ຮັບການສະເໜີຊື່.

ຂ້າພະເຈົ້າ ທ່ານ______________________ຕົກລົງໃຫ້ສະເໜີຊື່ ແລະ ຂໍ້ມູນໃນເອກະສານສະບັບນີ້ ເພື່ອໃຫ້ລົງສະໝັກເປັນສະມາຊິກສະພາບໍລິຫານຂອງບໍລິສັດ ແລະ ຂໍຮັບຮອງວ່າລາຍລະອຽດໃນແບບຟອມຂໍ້ມູນຂ້າງເທິງນີ້ຖືກຕ້ອງ, ຄົບຖ້ວນ ແລະ ເອກະສານປະກອບທີ່ຍື່ນມາພ້ອມນີ້ເປັນຄວາມຈິງທຸກປະການ ແລະ ຍິນຍອມໃຫ້ບໍລິສັດເປີດເຜີຍຂໍ້ມູນ ຫຼື ເອກະສານປະກອບດັ່ງກ່າວໄດ້.

ຊື່ ແລະ ນາມສະກຸນ (ບຸກຄົນທີ່ໄດ້ຮັບການສະເໜີຊື່)________________________
(________________________)
ວັນທີ____________________